ກະຊວງແຮງງານ ແລະການພັດທະນາກຳລັງແຮງງານ

ການປະເມີນການບໍລິການຈ້າງງານໃໝ່ (RESA)

ກອງປະຊຸມການຊອກຄົ້ນຫາ ວຽກ

ຂອບເຂດການຊອກຄົ້ນຫາວຽກ

- ເວລາ ແລະການຊອກລ່າຫາວຽກ
- ການວາງເວລາລ່ວງໜ້າ
- ເຮັດໃຫ້ຕົນເອງມີຄວາມຮັບຜິດຊອບ
- ເຮັດບັນທຶກໃຫ້ຖືກຕ້ອງ
- ຊອກຄົ້ນຫາ, ຊອກຄົ້ນຫາແລ້ວ, ຊອກຄົ້ນຫາອີກ
- ການສ້າງເຄືອຂ່າຍ
- ການຊອກຄົ້ນຫາວຽກທາງອິນເຕີເນັດ

ເວລາ ແລະການຊອກລ່າຫາວຽກ

- ການຊອກຫາວຽກແມ່ນເປັນການເຮັດວຽກເຕັມເວລາ!
- ໃຫ້ມີຄວາມກົງກັນທາງດ້ານເວລາໃນການຊອກຫາວຽກໃນແຕ່ລະອາທິດ. ຢ່າໃຊ້ເວລາ 40 ຊົ່ວໂມງໃນອາທິດໜຶ່ງ ແລະຈາກນັ້ນບໍ່ມີອັນໃດໃນສອງອາທິດຕໍ່ໄປ!
- ສ່ວນທີ່ຍາກທີ່ສຸດແມ່ນການເລີ່ມຕົ້ນ. ເມື່ອທ່ານໄດ້ຮັບພະລັງເຂົ້າສູ່ການຊອກຄົ້ນຂອງທ່ານແລ້ວ, ທ່ານຢາກຈະເຮັດການຊອກຄົ້ນຫາຕໍ່ໄປ.

ການວາງເວລາລ່ວງໜ້າ

- ການວາງເວລາລ່ວງໜ້າ ແລະການກຳນົດເປົ້າຫມາຍແມ່ນຄວນຈະເຮັດເປັນປະຈຳວັນ ຫຼືປະຈຳອາທິດ. ຕັ້ງເປົ້າໝາຍທີ່ສາມາດວັດແທກໄດ້.
- ຕົວຢ່າງ, ກຳນົດຊົ່ວໂມງທີ່ທ່ານຈະເຮັດການຄົ້ນຫາ ແລະກຳນົດແຜນການທີ່ທ່ານຈະບັນລຸໄດ້.
  - ຖ້າທ່ານກຳນົດເອົາເວລາ 9-11 ໂມງເຊົ້າຂອງວັນຈັນ ສຳລັບການຊອກຄົ້ນຫາຢູ່ໃນບັນທຶກຫ້ອງສະໝຸດ, ເປົ້າໝາຍຂອງທ່ານສາມາດກຳນົດໃຫ້ຊອກເຫັນນາຍຈ້າງ 10 ຄົນ. ເປົ້າໝາຍວັນອັງຄານຄວນຈະເປັນການຕິດຕໍ່ກັບນາຍຈ້າງ 10 ຄົນທີ່ໄດ້ລະບຸໃນວັນຈັນນັ້ນ. ເວລາ 1-3 ໂມງແລງຂອງວັນອັງຄານ ອາດຈະວາງກຳນົດວ່າຈະຕິດຕໍ່ໂດຍກົງທາງໂທລະສັບ. ໃຫ້ມີຄວາມໜ້າເຊື່ອຖື, ແຕ່ທ້າທາຍຕົນເອງ.

ເຮັດໃຫ້ຕົນເອງມີຄວາມຮັບຜິດຊອບ

- ກວດເບິ່ງຄວາມຄືບໜ້າຂອງທ່ານໃນແຕ່ລະມື້ ແລະແຕ່ລະທ້າຍອາທິດ. ໃຫ້ທົບທວນເບິ່ງວ່າທ່ານບັນລຸໄດ້ຕາມເປົ້າໝາຍຫຼືບໍ່. ຖ້າທ່ານບັນລຸໄດ້, ຊົມເຊີຍຕົນເອງ ແລະຕັດສິນໃຈໃໝ່ວ່າທ່ານສາມາດຕັ້ງເປົ້າໝາຍຍາກກ່ວານີ້ໃນຄັ້ງຕໍ່ໄປໄດ້ບໍ່.
- ຖ້າທ່ານບໍ່ບັນລຸໄດ້ຕາມເປົ້າໝາຍ, ໃຫ້ກວດຄືນເບິ່ງໃໝ່ວ່າເປັນຫຍັງ ແລະຕັດສິນໃຈໃໝ່ເບິ່ງວ່າທ່ານຕ້ອງເຮັດອັນໃດຕື່ມເພື່ອໃຫ້ສຳເລັດຜົນໃນອະນາຄົດ. ບາງທີເປົ້າໝາຍຂອງທ່ານອາດຈະບໍ່ເປັນໄປຕາມຄວາມຈິງ -- ທ່ານໄດ້ພະຍາມມາຫຼາຍແລ້ວ. ຮຽນຮູ້ຈາກປະສົບການນີ້ ແລະວາງແຜນໃຫ້ມີເປົ້າໝາຍແທດເໝາະກັບຕົວຈິງໃນອະນາຄົດ.
- ມັນອາດຈະເປັນຍຸດທະສາດອັນດີທີ່ຈະເອົາຜູ້ອື່ນເຂົ້າຮ່ວມໃນການຊອກຄົ້ນຫາຂອງທ່ານ. ລົມກັບໝູ່ເພື່ອນທີ່ໄວ້ໃຈໄດ້; ໃຫ້ການອະນຸຍາດກັບເຂົາເຈົ້າເຂົ້າຮ່ວມໃນຄວາມຮັບຜິດຊອບຕໍ່ແຜນການຂອງທ່ານ. ການເຂົ້າຮ່ວມໃນສະມາຄົມຈັດຫາວຽກແມ່ນຈະສາມາດເຮັດໃຫ້ທ່ານປຶກສາເລື່ອງການຊອກຄົ້ນຫາວຽກກັບຜູ້ອື່ນໆ.

ເຮັດບັນທຶກໃຫ້ຖືກຕ້ອງ

- ຖ້າທ່ານດຳເນີນການຊອກຫາວຽກຢ່າງຈິງຈັງ, ທ່ານອາດຈະຕິດຕໍ່ ແລະສ້າງໂອກາດອັນໃໝ່ໄດ້ຫຼາຍຮ້ອຍເລື່ອງໃນແຕ່ລະມື້. ຢ່າເພິ່ງພາພຽງແຕ່ຄວາມຊົງຈຳຂອງທ່ານ. ທ່ານຈະຕ້ອງມີ ແລະເກັບຮັກສາລະບົບການສຳເນົາເອກະສານ, ທ່ານພຽງແຕ່ເຮັດເປັນແບບບັນຊີລາຍການຮ້ານຂາຍເຄື່ອງ ຫຼື "ຈະເຮັດ".
- ມີຫຼາຍລະບົບທີ່ທ່ານສາມາດໃຊ້, ລວມທັງຈັດລຽງລະບົບແຟ້ມເອກະສານລຽງໄປຕາມຕົວອັກສອນ, ມີປະຕິທິນຂະໜາດນ້ອຍຕິດກະເປົາ ແລະປຶ້ມບັນທຶກ. ກວດເຊັກເບິ່ງອຸປະກອນຂອງທ່ານຢູ່ໃນທ້ອງຖິ່ນ ຫຼືຮ້ານຄ້າຫຼຸດລາຄາເປັນຕົວຢ່າງ. ຈັດໄວ້ໃຫ້ດີເພື່ອງ່າຍໃນການນຳໃຊ້ ແລະດູແລຮັກສາ.

ຊອກຄົ້ນຫາ, ຊອກຄົ້ນຫາແລ້ວ, ຊອກຄົ້ນຫາອີກ...

- ການຊອກຄົ້ນຫາແມ່ນສ່ວນທີ່ສຳຄັນອັນໜຶ່ງຂອງການກະກຽມຂອງທ່ານ. ເມື່ອຜູ້ໃດຜູ້ໜຶ່ງໄດ້ຍິນຄຳວ່າ "ຊອກຄົ້ນຫາ," ເຂົາເຈົ້າມີວິໃສທັດທີ່ຄິດເຫັນແຕ່ນັກວິທະຍາສາດຜູ້ບ້າໆທີ່ມີຫຼອດທົດລອງ, ມີກ້ອງຈຸລະທັດ ແລະຕະກຽງບຸນເສນ ອ້ອມຮອບຕົວໄປໝົດ. ຜູ້ອື່ນໆອາດຈະຄິດເຖິງການເດີນທາງທີ່ບໍ່ສິ້ນສຸດເຂົ້າໄປຫາຫ້ອງສະໝຸດທີ່ເຂົາເຈົ້າຕ້ອງອ່ານປຶ້ມເປັນກອງໆຢູ່.
- ປະເພດການຊອກຄົ້ນຫາທີ່ຈຳເປັນຢູ່ໃນການຄົ້ນຫາວຽກບໍ່ແມ່ນສິ່ງທີ່ທ່ານຄິດ.

ຊອກຄົ້ນຫາ (ຕໍ່)...

- ການຊອກຄົ້ນຫາແມ່ນເປັນເລື່ອງງ່າຍໆ ຄືການເບິ່ງການປະກາດວຽກຢູ່ຕາມໜັງສືພິມ. ການປະກາດວຽກຢູ່ໃນໜັງສືພິມ, ອິນເຕີເນັດ, ແຜ່ນພັບຂອງນາຍຈ້າງສາມາດທີ່ຈະເປັນແຫຼ່ງຂໍ້ມູນທີ່ດີສຳລັບການຄົ້ນພົບສິ່ງທີ່ເປັນປະສົບການ, ການຝຶກອົບຮົມ ແລະຄວາມຮູ້ແມ່ນເປັນສິ່ງທີ່ນາຍຈ້າງທັງຫຼາຍຕ້ອງການ.
- ທ່ານສາມາດວັດແທກຄຸນສົມບັດຂອງທ່ານທຽບກັບສິ່ງທັງໝົດທີ່ນາຍຈ້າງຕ້ອງການ.
- ຂໍ້ມູນທີ່ທ່ານໄດ້ຮັບໃນຂະນະທີ່ດຳເນີນການຊອກຄົ້ນນີ້ຍັງຈະເຮັດໃຫ້ນາຍຈ້າງໃນອະນາຄົດມີຄວາມປະທັບໃຈໃນລະຫວ່າງການສຳພາດ. ມັນອາດຈະເວົ້າໄດ້ວ່າທ່ານຈິງຈັງກ່ຽວກັບການຊອກຄົ້ນຫາວຽກ.

ຜົນປະໂຫຍດຂອງການຊອກຄົ້ນຫາ

- ຕົວຢ່າງ:
  - **ຈອນ**ກຳລັງຊອກຫາວຽກກ່ຽວກັບການຈອດ, ເຖິງແມ່ນວ່າລາວມີປະສົບການວຽກພຽງເລັກນ້ອຍ. ລາວບໍ່ຄິດວ່າມັນເປັນສິ່ງຈຳເປັນທີ່ຕ້ອງຊອກຄົ້ນຫາວຽກ ເນື່ອງຈາກວ່າລາວມີກຳນົດການສຳພາດກັບນາຍຈ້າງຂະຫນາດນ້ອຍຮຽບຮ້ອຍແລ້ວ. ຫຼັງຈາກຈົບຝຶກອົບຮົມເລື່ອງການຊອກຄົ້ນຫາວຽກ, ລາວຕັດສິນໃຈໄດ້ວ່າມັນອາດຈະເຮັດໃຫ້ລາວໄດ້ຮັບປະໂຫຍດຈາກການຊອກຄົ້ນຫານາຍຈ້າງ. ຫຼັງຈາກເຮັດການຊອກຄົ້ນຫາວຽກແລ້ວ, ລາວໄດ້ໄປສຳພາດ. ຄຳຖາມອັນໜຶ່ງທີ່ຖາມລາວແມ່ນ "ຈົ່ງບອກຂ້ອຍເບິ່ງວ່າເຈົ້າຮູ້ອັນໃດແດ່ກ່ຽວກັບບໍລິສັດນີ້." ເນື່ອງຈາກວ່າລາວໄດ້ເຮັດການຊອກຄົ້ນຫາວຽກ, ລາວສາມາດສ້າງຄວາມປະທັບໃຈໃຫ້ກັບຜູ້ສຳພາດຕາມຄວາມຮູ້ທີ່ລາວໄດ້ຮັບມາຈາກການຄົ້ນຫາວຽກ. ມື້ຕໍ່ມາລາວໄດ້ຮັບການສະເໜີໃຫ້ເຮັດວຽກເປັນຊ່າງຈອດ.

ຄຳຖາມຕົວຢ່າງ

- ສາມາດຕອບຄຳຖາມເຫຼົ່ານີ້ໄດ້ ຫຼັງຈາກເຮັດການຂອກຄົ້ນຫາບໍລິສັດ...
  - ນາຍຈ້າງໃຫ້ການສະໜອງຜະລິດຕະພັນ/ບໍລິການອັນໃດແດ່?
  - ນາຍຈ້າງມີລູກຈ້າງຫຼາຍປານໃດ?
  - ເຂົາເຈົ້າໄດ້ເຮັດທຸລະກິດນີ້ມາດົນປານໃດແລ້ວ?
  - ບໍລິສັດນາຍຈ້າງຕັ້ງຢູ່ໃສ? ມັນມີທີ່ຕັ້ງຢູ່ຫຼາຍກວ່າໜຶ່ງບ່ອນບໍ? ມັນຢູ່ໃນສາຍ ລົດເມຜ່ານບໍ?
  - ປັດຊະຍາ ຫຼືຄຳຂວັນຂອງນາຍຈ້າງແມ່ນຫຍັງ?
  - ສະຖານະການດ້ານການເງິນຂອງບໍລິສັດເປັນແນວໃດ? ມັນກຳລັງມີກຳໄລບໍ?
  - ປະລິມານການຜະລິດຂອງນາຍຈ້າງຫຼຸດນ້ອຍລົງບໍໃນ 5 ປີຜ່ານມາ?
  - ນາຍຈ້າງມີສ່ວນຮ່ວມໃນການບໍລິການຂອງຊຸມຊົນບໍ? ຖ້າມີ, ແມ່ນອັນໃດ?

ການສ້າງເຄືອຂ່າຍ

- ບ່ອນໃດກໍ່ຕາມທີ່ມີຊຸມຊົນ ແລະມີຄວາມສີວິໄລ ແມ່ນຈະມີເຄືອຂ່າຍ. ສິ່ງທີ່ປ່ຽນແປງໄປຕາມການເວລາ ແມ່ນວິທີການທີ່ເຮັດໃຫ້ການສ້າງເຄືອຂ່າຍເກີດຂຶ້ນ.
- ໃນອະດີດ, ການສ້າງເຄືອຂ່າຍແມ່ນບໍ່ເປັນທາງການ ແລະເປັນແບບສຸ່ມ. ຕົວຈິງແລ້ວ, ຄົນສ່ວນໃຫຍ່ແມ່ນບໍ່ຮູ້ເລີຍວ່າເຂົາເຈົ້າກຳລັງສ້າງເຄືອຂ່າຍ.
- ປະຈຸບັນນີ້, ການສ້າງເຄືອຂ່າຍແມ່ນເປັນເລື່ອງທີ່ຕ້ອງໄດ້ຄິດໄລ່ ແລະວາງເປັນກອບໄວ້. ຄົນສ້າງເຄືອຂ່າຍທຸກໆມື້ໂດຍທີ່ບໍ່ໄດ້ຄິດເຖິງມັນ. ເຖິງແນວໃດກໍ່ຕາມ, ຄົນຫຼາຍຄົນກຳລັງສ້າງເຄືອຂ່າຍເປັນສ່ວນໜຶ່ງໃນກິດຈະກຳປະຈຳວັນຂອງເຂົາເຈົ້າ.

ການຊອກຄົ້ນຫາຕະຫຼາດວຽກທີ່ບໍ່ເປີດເຜີຍ

- ນາຍຈ້າງສ່ວນໃຫຍ່ບໍ່ຕ້ອງການໂຄສະນາ. ເຂົາເຈົ້າມີຜູ້ສະໝັກພຽງພໍໂດຍທີ່ບໍ່ຕ້ອງເຮັດການປະກາດ.
- ນອກຈາກນັ້ນ, ນາຍຈ້າງສ່ວນໃຫຍ່ບໍ່ຕ້ອງການລົງໂຄສະນາ. ເຂົາເຈົ້າຈະພິຈາລະນາເອົາບາງຄົນທີ່ໄດ້ຮັບການແນະນຳມາຈາກລູກຈ້າງ ຫຼືເພື່ອນຮ່ວມງານທີ່ໄວ້ໃຈໄດ້.
- ມັນຄືກັບການຊອກຫາທ່ານໝໍ ຫຼືຊ່າງແປງລົດ; ຄົນສ່ວນໃຫຍ່ຈະໄປຫາບາງຄົນທີ່ໄດ້ຮັບການແນະນຳມາຫຼາຍກວ່າທີ່ຈະໄປຫາຜູ້ທີ່ມີຊື່ພົບຢູ່ໃນການໂຄສະນາ.
- ຖ້າເກີດເປັນໃນກໍລະນີນີ້, ຄົນເຮົາຈະພົບວຽກເຫຼົ່ານີ້ໄດ້ແນວໃດ?
  - <u>ການຕິດຕໍ່ກັບນາຍຈ້າງໂດຍກົງ</u> ແລະ;
  - <u>ການສ້າງເຄືອຂ່າຍ</u> ແມ່ນເປັນໃຫ້ຄຳຕອບກັບທ່ານ.

ການຊອກຄົ້ນຫາຕະຫຼາດວຽກທີ່ບໍ່ເປີດເຜີຍ

- ການສ້າງເຄືອຂ່າຍເປັນທາງການແມ່ນເປັນການຊອກຫາຜູ້ຕິດຕໍ່ ແລະຂໍ້ມູນໃໝ່ທີ່ເປັນລະບົບ. ມັນໄດ້ມີການວາງແຜນ ແລະຈັດກຽມ.
- ການສ້າງເຄືອຂ່າຍແມ່ນເປັນເລື່ອງຄວາມສຳພັນ. ຄວາມສຳພັນການສ້າງເຄືອຂ່າຍອັນດີແມ່ນຈະເປັນຜົນປະໂຫຍດຮ່ວມກັນກັບທັງສອງຝ່າຍ.
- ຫຼາຍຄົນມີບັນຫາກັບການສ້າງເຄືອຂ່າຍເປັນທາງການ, ໂດຍສະເພາະແມ່ນຍຸດທະສາດການຄົ້ນຫາວຽກ.

ການຊອກຄົ້ນຫາຕະຫຼາດວຽກທີ່ບໍ່ເປີດເຜີຍ

- ຕໍ່ໄປນີ້ແມ່ນສິ່ງທີ່ກໍ່ໃຫ້ເກີດຄວາມກັງວົນໃນການສ້າງເຄືອຂ່າຍທົ່ວໄປ--
  - ຂ້າພະເຈົ້າເຂີນອາຍທີ່ຈະຍອມຮັບວ່າຕົນເອງກຳລັງຊອກວຽກເຮັດ.
  - ຂ້າພະເຈົ້າຮູ້ສຶກວ່າມັນຄືກັບການຂໍວຽກເຮັດ.
  - ຂ້າພະເຈົ້າບໍ່ຢາກໃຫ້ຄົນຄິດວ່າ ຂ້າພະເຈົ້າກຳລັງເອົາປຽບເຂົາເຈົ້າ.



- ດຽວນີ້, ຈົ່ງລືມຄວາມກັງວົນເຫຼົ່ານີ້ໄປ--
  - ການຊອກວຽກເຮັດບໍ່ໄດ້ນຳໄປສູ່ປົ່ມດ້ວຍທີ່ມັນເກີດຂຶ້ນໃນອະດີດ. ໂດຍສະເລ່ຍຄົນເຮົາຈະປ່ຽນວຽກໃນທຸກໆ 5 ປີ.
  - ການສ້າງເຄືອຂ່າຍບໍ່ແມ່ນເປັນການຂໍທານ. ຕົວຈິງແລ້ວ, ທ່ານບໍ່ຄວນຂໍ້ວຽກເຮັດ; ທ່ານຄວນຈະຊອກຫາຂໍ້ມູນທີ່ນຳໄປສູ່ວຽກເຮັດ.
  - ການສ້າງເຄືອຂ່າຍທີ່ດີແມ່ນຄວາມສຳພັນທີ່ມີຜົນປະໂຫຍດຮ່ວມກັນ. ວາງແຜນເພື່ອເປັນການໃຫ້ ຫຼືຫຼາຍກວ່າທີ່ທ່ານຮັບ.

ຍຸດທະສາດການສ້າງເຄືອຂ່າຍ

- ຢ່າລໍຖ້າພຽງແຕ່ທີ່ຈະໃຫ້ພົ້ກັບຄົນໂດຍບັງເອີນ. ລິເລີ່ມການຕິດຕໍ່ເພື່ອຈຸດປະສົງການສ້າງເຄືອຂ່າຍຢ່າງດຽວ.
- ສ້າງບັນຊີໃນການສ້າງເຄືອຂ່າຍ. ເຮັດການຕິດຕໍ່ກັບແຕ່ລະຄົນໃນບັນຊີຂອງທ່ານ. ເພີ່ມຊື່ຄົນຜູ້ທີ່ທ່ານພົບ ຫຼືໄດ້ຮັບການແນະນຳມາຈາກຜູ້ຕິດຕໍ່ຂອງທ່ານ.
- ວາງເປົ້າໝາຍການສ້າງເຄືອຂ່າຍ. ຂຽນເປົ້າໝາຍສະເພາະສຳລັບຜູ້ຕິດຕໍ່ຢູ່ໃນເຄືອຂ່າຍ ຈັກຄົນທີ່ທ່ານມີແຜນຈະຕິດຕໍ່ໃນແຕ່ລະອາທິດ. ກວດເຊັກເບິ່ງຄວາມຄືບໜ້າຂອງທ່ານ ປົກກະຕິ.
- ຖາມກັບຄົນຢູ່ເລື້ອຍໆວ່າມີຜູ້ອື່ນອີກບໍທີ່ທ່ານຄວນຈະພົບ. ຖາມເບິ່ງວ່າທ່ານສາມາດໃຊ້ຊື່ຂອງລາວ/ນາງໄດ້ບໍ ເມື່ອຕິດຕໍ່ກັບຄົນຜູ້ນັ້ນ.
- ຮັກສາແฟ້ມບັນທຶກເຄືອຂ່າຍ. ເກັບຮັກສາບັນທຶກຜົນໄດ້ຮັບຂອງຜູ້ຕິດຕໍ່ແຕ່ລະຄົນ ແລະຂໍ້ມູນກ່ຽວກັບຜູ້ນັ້ນ.
- ເມື່ອເປັນໄປໄດ້ ແມ່ນໄປພົບດ້ວຍຕົນເອງ.
- ໃຫ້ຄົນຜູ້ນັ້ນຮູ້ວ່າທ່ານເຫັນຄຸນຄ່າຂໍ້ມູນ ແລະແນວຄວາມຄິດທາງດ້ານການປະກອບອາຊີບຂອງລາວ/ນາງ.
- ວາງແຜນຕິດຕາມຄືນຂອງທ່ານ. ໃນເວລາທີ່ທ່ານພົບກັບບາງຄົນ, ວາງແຜນການໄວ້ວ່າທ່ານຈະຕິດຕໍ່ກັບຄົນຜູ້ນີ້ອີກເມື່ອໃດ. ຂຽນໄວ້ໃນແຜນປະຕິທິນຕິດຕາມ.
- ຖ້າທ່ານເຫັນດີທີ່ຈະເຮັດອັນໃດໜຶ່ງໃຫ້ກັບຜູ້ໃດໜຶ່ງ, ໃຫ້ແນ່ໃຈວ່າປະຕິບັດຕາມນັ້ນ.
- ກ່າວຄຳວ່າ “ຂອບໃຈ" ຢູ່ສະເໝີ. ສົ່ງຈົດໝາຍ ຫຼືບັດໄປສະນີໄປຂອບໃຈ.

ການຂອກຄົ້ນຫາວຽກໃນອິນເຕີເນັດ

- ອິນເຕີເນັດເປັນພື້ນຖານສ່ວນໜຶ່ງທີ່ເຮັດໃຫ້ເຮົາໄດ້ຮັບຂໍ້ມູນ, ການສື່ສານ ແລະການເຮັດທຸລະກິດໄດ້ຢ່າງໄວ. ມັນຍັງກາຍເປັນເຄື່ອງມືອັນສຳຄັນໃນການຄົ້ນຫາວຽກໄດ້ຢ່າງມີປະສິດຕິພາບ.
- ການຂອກຄົ້ນຫາວຽກທີ່ປະສົບຜົນສຳເລັດໄດ້ແມ່ນຕ້ອງການຄວາມຊຳນານ, ເຄື່ອງມື ແລະຍຸດທະສາດຫຼາຍອັນ. ບໍ່ແມ່ນຈະມີພຽງແຕ່ປັດໃຈອັນດຽວທີ່ຈະນຳໄປສູ່ຄວາມສຳເລັດໄດ້. ມັນເປັນການປະສົມປະສານຄວາມພະຍາຍາມຫຼາຍອັນ. ອິນເຕີເນັດເປັນຂຸມຄຳຂອງຂໍ້ມູນການຈ້າງງານ.
- ຄົນຜູ້ທີ່ຮຽນໃຊ້ອິນເຕີເນັດຈະມີຄວາມໄດ້ປຽບຫຼາຍກວ່າຜູ້ບໍ່ໃຊ້. ມັນກຸ້ມຄ່າທີ່ຈະໃຊ້ເວລາຮຽນຮູ້ອິນເຕີເນັດ ແລະໃຊ້ເຂົ້າໃນການຂອກຄົ້ນຫາວຽກຂອງທ່ານ.

ເຄື່ອງຈັກຊອກຄົ້ນຫາ

- ເຄື່ອງມືພື້ນຖານສຳລັບການຊອກຫາຂໍ້ມູນໃນອິນເຕີເນັດແມ່ນເຄື່ອງຈັກຄົ້ນຫາ. ເຄື່ອງຈັກຄົ້ນຫາໃຊ້ຄຳສຳຄັນເພື່ອຊອກຫາໜ້າເວັບ, ບັນຊີລາຍການຢູ່ໃນບັນທຶກຂໍ້ມູນທາງອີເລັກໂທຣນິກ. ເຄື່ອງຈັກບາງອັນຊອກຄົ້ນຫາອິນເຕີເນັດໂດຍທົ່ວໄປ, ໃນຂະນະທີ່ບາງອັນຊອກຄົ້ນຫາທີ່ຕັ້ງສະເພາະ. ການຮູ້ຈັກໃຊ້ເຄື່ອງມືເຫຼົ່ານີ້ຢ່າງຊຳນານແມ່ນມີຄວາມສຳຄັນຕໍ່ການກຳນົດຫາຂໍ້ມູນຢ່າງມີປະສິດທິພາບ ແລະມີປະສິດທິຜົນຢູ່ໃນອິນເຕີເນັດ.

- ມີທີ່ຕັ້ງການຊອກຄົ້ນຫາຫຼາຍບ່ອນຢູ່ໃນອິນເຕີເນັດ. ແຕ່ລະບ່ອນມີຄວາມແຕກຕ່າງເລັກນ້ອຍຢູ່ໃນຈຸດເນັ້ນ ແລະຢູ່ໃນການນຳໃຊ້ຂອງມັນ. ເພື່ອທີ່ຈະຮຽນຮູ້ວິທີການນຳໃຊ້ເຄື່ອງຈັກຄົ້ນຫາສະເພາະ, ໃຫ້ເຂົ້າໄປຫາໜ້າຕາບ່ອນ “ຊ່ວຍເຫຼືອ".

- ທ່ານສາມາດໃຊ້ອິນເຕີເນັດເຜີຍແຜ່ຊີວະປະຫວັດຂອງທ່ານ, ເຮັດການຕິດຕໍ່ໂດຍກົງກັບນາຍจ้างอะนาคิด ແລະຕິດຕາມການນຳໄປສູ່ວຽກ.

ການຊອກຄົ້ນຫາວຽກ

- ຂໍ້ມູນແມ່ນເປັນສ່ວນສຳຄັນຂອງການຊອກຄົ້ນຫາວຽກທີ່ປະສົບຜົນສຳເລັດ ແລະໄດ້ຮັບມາຜ່ານການຊອກຄົ້ນຫາ. ທ່ານຈະຕ້ອງຮຽນຮູ້ໃຫ້ຫຼາຍເທົ່າທີ່ຈະເປັນໄປໄດ້ກ່ຽວກັບນາຍຈ້າງໃນອະນາຄົດ, ອາຊີບຂອງທ່ານ ແລະອຸດສາຫະກຳຂອງທ່ານ.
- ບໍ່ມີສິ່ງດັ່ງກ່າວ ແມ່ນຈະເຮັດໃຫ້ມີບໍ່ມີຂໍ້ມູນຫຼາຍໃນການຊອກຄົ້ນຫາວຽກ. ຂໍ້ມູນແມ່ນພະລັງອຳນາດ. ຂໍ້ມູນເຮັດໃຫ້ທ່ານມີການຄວບຄຸມ ແລະມີຄວາມໝັ້ນໃຈ.

ຜົນປະໂຫຍດຂອງການໃຊ້ອິນເຕີເນັດ ເພື່ອການຊອກຄົ້ນ

- ທຸກປຶ້ມບັນຊີໂທລະສັບທີ່ໄດ້ຕີພິມອອກຢູ່ໃນສະຫະລັດແມ່ນມີຢູ່ໃນອິນເຕີເນັດ. ມັນບໍ່ພຽງແຕ່ຈະບອກເຖິງທີ່ຢູ່ຂອງນາຍຈ້າງໃນອະນາຄົດເທົ່ານັ້ນ, ແຕ່ທ່ານຍັງສາມາດຄລິກເຂົ້າໄປໃນແຜນທີ່ ເຊິ່ງບອກທາງໄປຫາທີ່ຕັ້ງນັ້ນຢ່າງຖືກຕ້ອງ.
- ສຸມສະມາທິໃສ່ໃນຄວາມພະຍາຍາມຂອງທ່ານ
- ປັບປຸງການຈັດການດ້ານເວລາ ແລະການຕັດສິນໃຈ
- ຫຼຸດຜ່ອນຄວາມພະຍາຍາມທີ່ເສຍປະໂຫຍດໄປໃຫ້ໜ້ອຍທີ່ສຸດ
- ປັບປຸງຄວາມມີປະສິດທິພາບຊີວະປະຫວັດ ແລະຈົດໝາຍປົກໜ້າ
- ກຽມພ້ອມຕົວເອງເພື່ອໃຫ້ໄດ້ຜົນງານທີ່ດີໃນການສຳພາດ
- ສ້າງຄວາມເຂັ້ມແຂງໃນຄວາມສາມາດຂອງຕົນເອງເພື່ອເຈລະຈາການສະເໜີວຽກໃຫ້ເຮັດໃຫ້ດີທີ່ສຸດ
- ເພີ່ມທ່າແຮງເພື່ອເຮັດໃຫ້ການຄົ້ນຫາວຽກສຳເລັດຜົນ, ຄວາມພໍໃຈໃນວຽກ, ແລະການຮັບປະກັນທາງດ້ານເສດຖະກິດ
- ແຍກຕົວຂອງທ່ານອອກຫ່າງຈາກຜູ້ຊອກຫາວຽກຄົນອື່ນ
- ປັບປຸງທ່າແຮງຂອງຕົນເອງເພື່ອໃຫ້ເກີດຜົນສຳເລັດ ເມື່ອທ່ານເລີ່ມວຽກໃໝ່

ຕົວຢ່າງຂອງການໃຊ້ອິນເຕີເນັດ

- **ແມຣີ**ຫາກໍ່ຈົບຈາກການຝຶກອົບຮົມເປັນຜູ້ຊ່ວຍພະຍາບານ ແລະກຳລັງຊອກຫານາຍຈ້າງໃນອະນາຄົດ. ນາງຕັດສິນໃຈດ້ວຍວິທີດີທີ່ສຸດເພື່ອເລີ່ມຕົ້ນກໍຄືການຊອກຊື້ ແລະທີ່ຢູ່ບ່ອນດຳເນີນການພະຍາບານຢູ່ໃນປຶ້ມໂທລະສັບ. ຢູ່ໃນສູນຊ່ວຍເຫຼືອອາຊີບໃນທ້ອງຖິ່ນແຫ່ງໜຶ່ງ, ນາງສາມາດເຂົ້າເຖິງປຶ້ມໂທລະສັບຢູ່ໃນອິນເຕີເນັດ. ໂດຍການໃຊ້ຄວາມພະຍາຍາມພຽງເລັກນ້ອຍ, ນາງພົບເຫັນບັນຊີສະຖານພະຍາບານຢູ່ໃນພື້ນທີ່ຂອງນາງ, ພ້ອມດ້ວຍແຜນທີ່ໄປຫາທີ່ຕັ້ງຂອງເຂົາເຈົ້າ ແລະຕົວເຊື່ອມຕໍ່ຫາເວັບໄຊທ໌ຂອງເຂົາເຈົ້າ. ລົນດາເຮັດຕາມຕົວເຊື່ອມຕໍ່ອັນໜຶ່ງ ແລະພົບເຫັນສະຖານພະຍາບານບ່ອນໜຶ່ງຢູ່ທີ່ຢູ່ໃກ້. ຢູ່ໃນນັ້ນນາງພົບເຫັນມີຂໍ້ມູນກ່ຽວກັບສິ່ງອຳນວຍຄວາມສະດວກ ແລະຍັງພົບມີບັນຊີວຽກເປີດໃຫ້ສະໝັກ. ນາງຍັງພົບເຫັນມີຊື່, ເບີໂທລະສັບ ແລະທີ່ຢູ່ອີເມລ໌ຂອງຜູ້ຊ່ວຍຜູ້ຈັດການພະຍາບານຮັບຜິດຊອບຕໍ່ການຈ້າງຜູ້ຊ່ວຍພະຍາບານ..

ທ່ານຈະຕ້ອງຮຽນຮູ້ໃຫ້ຫຼາຍເທົ່າທີ່ຈະເຮັດໄດ້ ກ່ຽວກັບນາຍຈ້າງໃນອະນາຄົດ, ອາຊີບຂອງທ່ານ ແລະອຸດສາຫະກຳຂອງທ່ານ

ແຫຼ່ງຂໍ້ມູນອອນໄລນ์

- http://www.sourcetn.org (ເວັບໄຊທ์ຈຸດລວມອັນ ຫນຶ່ງຂອງທ່ານເພື່ອຊອກຄົ້ນຫາວຽກ ແລະຂໍ້ມູນາຍจ้าๆ)
- http://www.yellowpages.com (ການຊອກຫາຂໍ້ ມູນ)
- http://www.jobcentral.com ເວັບໄຊທ์ແລກປ່ຽນ ແຮງງານແຫ່ງຊາດ (ການຄົ້ນຫາວຽກ)
- http://ecmats.state.tn.us ກົນທະນາຄານວຽກໃຊ้ ແຮງງານຂອງລັດເທນເນັສຊີ (ການຊອກຄົ້ນຫາວຽກ)

ກອງປະຊຸມຂອກຄົ້ນຫາວຽກ

ຂໍສະແດງຄວາມຍິນດີ!
ທ່ານໄດ້ສຳເລັດກອງປະຊຸມ
ການຂອກຄົ້ນຫາວຽກແລ້ວ.